Savan PAD ຈົດໝາຍແຈ້ງຂ່າວ
15 ກໍລະກົດ, 2021
20

# ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (2)

ຕໍ່ຈາກສະບັບແລ້ວນີ້, ພວກເຮົາແນໃສ່ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (ກປມ) ທີ່ກຳລັງຂໍເຕັກນິກການໃຫ້ຄຳແນະນຳແກ່ຊາວນາໃນລະດັບເມືອງ.ໃນທົ່ວແຂວງສະຫວັນນະເຂດມີ 15 ຕົວເມືອງ ແລະ ອີງຕາມຂໍ້ມູນໃນເດືອນກໍລະກົດປີ 2021,ໂຄງການ Savan PAD ໄດ້ເລືອກເອົາບ້ານເປົ້າໝາຍ 12 ບ່ອນ ໃນ 9 ຕົວເມືອງໃນແຂວງສະຫວັນນະເຂດ. ເມືອງຊົນນະບູລີ ແລະ ພະລານໄຊ ແມ່ນເປັນເມືອງເກົ່າແກ່ອັນດັບສອງຂອງບັນດາເມືອງທີ່ໂຄງການໄດ້ເລີ່ມຕົ້ນກິດຈະກຳຂອງພວກເຂົາແຕ່ເດືອນມິຖຸນາປີ 2018.

## ກປມ ເມືອງຊົນນະບູລີ

ໂຄງການເປົ້າໝາຍ : ໜອງບົວຫຼວງ



ທ່ານ ຄຳສຸກ
ຫົວໜ້າ ກປມ ເມືອງຊົນນະບູລີ




ເມືອງຊົນນະບູລີ ໄດ້ຮັບຜົນກະທົບຈາກນ້ຳຖ້ວມຍາວນານມາ 6 ປີແລ້ວ, ໂດຍສະເພາະແມ່ນນາປີ, ແຕ່ເມືອງເຮົາເອົາໃຈໃສ່ການຜະລິດໃນລະດູແລ້ງ ເປົ້າໝາຍ 4,9 ໂຕນ/ເຮັກຕາ ໂດຍການສະໜັບສະໜູນຈາກໂຄງການ Savan PAD. ພະນັກງານວິຊາການແຕ່ລະດ້ານມີໜ້າວຽກກ່ຽວພັນກັນ ແລະ ສາມາດເຮັດວຽກປ່ຽນກັນໄດ້, ດັ່ງນັ້ນ ຈຶ່ງມີຄວາມໝັ້ນໃຈວ່າແນວທາງປະຕິບັດທີ່ໂຄງການຊີ້ນຳນີ້ຈະຍືນຍົງ. ພິເສດແມ່ນດ້ານຊົນລະປະທານ ກຸ່ມນຳໃຊ້ນ້ຳສາມາດຈັດ ການແຈກຢາຍນ້ຳ ແລະ ຮອບວຽນນ້ຳໄດ້ດີ. ການນຳໃຊ້ລະບົບຊົນລະປະທານທີ່ມີປະສິດທິພາບສົ່ງຜົນເຖິງຄ່າກະແສໄຟຟ້າ ເຊິ່ງປີນີ້ເຮົາບໍ່ມີໜີ້ຄ້າງຈ່າຍ ແລະ ມັນກໍ່ເປັນຜົນຮັບທີ່ດີຂອງເມືອງ

### ດ້ານເຕັກນິກກະສິກຳ (ການປູກເຂົ້າ)

- ນະໂຍບາຍກູ້ຢືມແນວພັນເຂົ້າ ແລະ ປຸ໋ຍແມ່ນຈັດຂຶ້ນ 4 ຄັ້ງ. 134 ຄົວເຮືອນ(ເກືອບທັງໝົດຄົວເຮືອນ) ໃນເຂດເປົ້າໝາຍໄດ້ເຂົ້າຮ່ວມ.
- ສະມັດຕະພາບເຂົ້າໃນໂຄງການເປົ້າໝາຍເພີ່ມຂຶ້ນ 30%*

*ຜົນສຳຫຼວດສະມັດຕະພາບລະດູແລ້ງປີ 2017-18 & 2020-21



### ດ້ານຊົນລະປະທານ / ສ້າງຄວາມເຂັ້ມແຂງໃຫ້ກຸ່ມນຳໃຊ້ນ້ຳ

- ກຸ່ມນຳໃຊ້ນ້ຳ ແລະ ຊາວນາມີຄວາມຕັ້ງໃຈສູງໃນການຂະຫຍາຍພື້ນທີ່ຊົນລະປະທານຊຸກຍູ້ໃຫ້ພວກເຂົາຂະຫຍາຍຄອງດິນດ້ວຍຄ່າໃຊ້ຈ່າຍ ແລະ ແຮງງານຂອງພວກເຂົາເອງ.
- ພາຍຫຼັງຂະຫຍາຍຄອງເໝືອງ ກປມ ໄດ້ໃຫ້ຄຳແນະນຳໃນການແຈກຢາຍນ້ຳຢ່າງສະດວກສະບາຍ.
- ຂະຫຍາຍເນື້ອທີ່ຊົນລະປະທານໃນບ້ານເປົ້າໝາຍ: 40ຮຕ → 108ຮຕ*

*ສົມທຽບລະຫວ່າງລະດູແລ້ງປີ 2017-18 & 2020-21

### ການຕະຫຼາດ / ການປູກພືດສວນ

- ປະຈຸບັນໄດ້ສ້າງເຮືອນຮົ່ມ (ສຳລັບປູກຜັກ) ຈຳນວນ 8 ແຫ່ງ ໃນບ້ານເປົ້າໝາຍຈຳນວນເຮືອນຮົ່ມທັງໝົດປະມານ25ຫຼັງ.
- ຊາວນາ ແລະ ພະນັກງານ ກປມ ກຳລັງຮຽນຮູ້ວິທີເຮັດຝຸ່ນໝັກ ແລະ ໂບກາຊິຢ່າງກະຕືລືລົ້ນ.
- ຊາວນາຂາຍຜັກທີ່ປູກໃນເຮືອນຮົ່ມເຊິ່ງສ້າງຍອດຂາຍໄດ້ແບບວ່ອງໄວ.

### ພາບລວມ

ຍັງມີຄວາມຮຽກຮ້ອງການສະໜັບສະໜຸນຫຼາຍຢູ່ເມືອງຊົນນະບູລີ. ຜູ້ທີ່ອາໄສຢູ່ນີ້ແມ່ນມີແຮງຈູງໃຈສູງ ແລະ ເຮັດວຽກເປັນທີມໄດ້ດີດ້ວຍຄວາມເປັນຜູ້ນຳ. ກົງກັນຂ້າມ, ນ້ຳຖ້ວມເລື້ອຍໆເຮັດໃຫ້ການສັນຈອນຕິດຂັດບາງຄັ້ງ. ສະນັ້ນ, ພະນັກງານ ກປມ ກຳລັງຢ້ຽມຢາມຊາວນາເພື່ອເຮັດໃຫ້ການປູກຝັງໃນລະດູແລ້ງປະສົບຜົນສຳເລັດ.

# ກປມ ເມືອງພະລານໄຊ

ໂຄງການເປົ້າໝາຍ : ພະນົມໄຊ




ເມືອງພະລານໄຊ ເຮັດການຜະລິດເຂົ້າໂດຍນຳໃຊ້ນ້ຳຊົນລະປະທານຈາກເຊຊຳຊອຍ ແລະ ສຸມໃສ່ການສ້າງຄວາມເຂັ້ມແຂງດ້ານການຜະລິດເປັນສອງລະດູການ. ພວກເຮົາຢາກໃຫ້ໂຄງການ Savan PAD ສືບຕໍ່ໄປອີກ ເພາະວ່າເຮົາໄດ້ຮັບຜົນປະໂຫຍດຫຼາຍຢ່າງຈາກໂຄງການນີ້ເຊັ່ນ: ວຽກງານດ້ານຊົນລະປະທານໄດ້ປັບປຸງຂຶ້ນ, ກຸ່ມນ້ຳໃຊ້ນ້ຳສາມາດສ້າງກອງທຶນຂອງຕົນເອງ, ດ້ານກະສິກຳກໍ່ມີການປູກພືດຜັກໃນເຮືອນຮົ່ມເຊິ່ງສາມາດຜະລິດໄດ້ທັງລະດູແລ້ງ ແລະ ລະດູຝົນ, ດ້ານການຕະຫຼາດກໍ່ມີການສ້າງຕະຫຼາດຜັກອິນຊີຂຶ້ນມາເຊິ່ງວ່າສິ່ງເຫຼົ່ານີ້ເປັນຈຸດພົ້ນເດັ່ນ ແລະ ເປັນໜ້າເປັນຕາໃຫ້ເມືອງພະລານໄຊເຮົາ.



ທ່ານ ບັນລັງ
ຫົວໜ້າ ກປມ ເມືອງພະລານໄຊ

## ການຕະຫຼາດ / ການປູກພືດສວນ

- ປະຈຸບັນກຳລັງເລັ່ງຕິດຕັ້ງ ແລະ ສ້ອມແປງເຮືອນຮົ່ມເພື່ອເພີ່ມຍອດຂາຍຜັກໃນຊ່ວງລະດູຝົນ ເພາະວ່າຍອດຂາຍໃນຊ່ວງລະດູແລ້ງລຸດລົງຫຼາຍ. ນະຕອນນີ້ເຮືອນຮົ່ມທັງໝົດທີ່ໄດ້ກະກຽມໄວ້ແມ່ນ 35 ຫຼັງ.
- ພະນັກງານ ກປມ ນີ້ຂ້ອນຂ້າງກະຕືລືລົ້ນ ເອົາໃຈໃສ່ສະໜັບສະໜູນຊາວນາ.

## ພາບລວມ

ເມື່ອງພະລານໄຊຕັ້ງຢູ່ທາງເລກທີ 9 ເຊິ່ງເປັນທາງອອກສູ່ຫວຽດນາມກັບການສັນຈອນທີ່ໜາແໜ້ນ. ນອກຈາກນັ້ນ,ກປມ ຫາບ້ານເປົ້າໝາຍມີໄລຍະທາງຂ້ອນຂ້າງໃກ້ ດັ່ງນັ້ນພະນັກງານເມືອງກໍ່ສາມາດໄປຢ້ຽມຢາມຢ່າງງ່າຍດາຍ.



## ດ້ານເຕັກນິກກະສິກຳ (ການປູກເຂົ້າ)

- ນະໂຍບາຍກູ້ຢືມເມັດພັນເຂົ້າ ແລະ ປຸ໋ຍໄດ້ຈັດຂຶ້ນ 3 ຄັ້ງ, ມີຜູ້ເຂົ້າຮ່ວມ 64 ຄົວເຮືອນ(44% ຂອງຊາວນາທັງໝົດໃນກຸ່ມເປົ້າໝາຍ).
- ຈຳນວນເງິນກູ້ຢືມແມ່ນເກັບໄດ້ເກືອບ 100%.
- ສະມັດຕະພາບເຂົ້າໃນໂຄງການເປົ້າໝາຍເພີ່ມຂຶ້ນ24%*

*ຜົນສຳຫຼວດສະມັດຕະພາບລະດູແລ້ງປີ 2017-18 & 2020-21

- ຊາວນາຜູ້ທີ່ຕັ້ງໃຈທົດລອງສິ່ງໃໝ່ໆເຊັ່ນວ່າ: ແນວພັນເຂົ້າ, ແນວພັນພືດ, ການໃສ່ປຸ໋ຍ, ການຄວບຄຸມພະຍາດ/ແມງໄມ້.

## ດ້ານຊົນລະປະທານ / ສ້າງຄວາມເຂັ້ມແຂງໃຫ້ກຸ່ມນຳໃຊ້ນ້ຳ

- ກຸມນຳໃຊ້ນ້ຳ ແລະ ຊາວນາຕ່າງກໍ່ເຂົ້າໃຈການເກັບເງິນຄ່ານ້ຳ. ໃນປະຈຸບັນນີ້, ອັດຕາການເກັບໄດ້ເກືອບ 100%
- ການຂະຫຍາຍເນື້ອທີ່ຊົນລະປະທານໃນບ້ານເປົ້າໝາຍ:

49ຮຕ → 156ຮຕ*.

*ສົມທຽບລະຫວ່າງລະດູແລ້ງປີ 2017-18 & 2020-21

## ຊ່ຽວຊານໃໝ່ ທ່ານ. ມັດຊຸຍ (ສົ່ງເສີມການຂາຍ / ການສ້າງຄວາມເຂັ້ມແຂງກຸ່ມຊາວນາ)



ທ່ານ. ມັດຊຸຍ ກຳລັງລົງຢ້ຽມຢາມສວນຜັກຂອງຊາວນາ
(ຜູ້ທີສອງນັບຈາກເບື້ອງຂວາ)

ໜຶ່ງໃນຈຸດສຳຄັນທີ່ໂຄງການ Savan PAD ເນັ້ນ "ການຜະລິດກະສິກຳໂດຍການເພີ່ມມູນຄ່າໃຫ້ສູງ", ເຊິ່ງເລັງໃສ່ການປັບປຸງຊີວິດການເປັນຢູ່ ຈາກການປູກພືດຜັກອີງໃສ່ຄວາມຕ້ອງການຂອງຕະຫຼາດ ຜ່ານການມີສ່ວນຮ່ວມຂອງຊາວນາໃນຂັ້ນຕອນການສຳຫຼວດຕະຫຼາດ, ການຄັດເລືອກພືດ ແລະ ການວາງແຜນການປູກ. ເພື່ອທີ່ຈະເຮັດໄດ້ແນວນັ້ນ, ຂ້າພະເຈົ້າເອງໄດ້ຊ່ວຍພະນັກງານລັດໃນການແນະນຳເຕັກນິກ ໂດຍສະເພາະແມ່ນການສ້າງຄວາມເຂັ້ມແຂງໃຫ້ກຸ່ມຊາວນາ ແລະ ການຕອບສະໜອງຕາມຄວາມຕ້ອງການຂອງຕະຫຼາດ,ນອກຈາກນັ້ນ, ຍັງສົ່ງເສີມການຂາຍຜົນຜະລິດຂອງຊາວນາອີກດ້ວຍ.

ຈົດໝາຍແຈ້ງຂ່າວຂອງໂຄງການ ສະຫວັນເພັດ
ໂຄງການພັດທະນາ ກະສິກຳ ແບບມີສ່ວນຮ່ວມ ແຂວງສະຫວັນນະເຂດ (ສະຫວັນເພັດ)
ຕູ້ ປ.ນ. 16, ຂະແໜງຊົນລະປະທານ, ພະແນກ ກະສິກຳ ແລະ ປ່າໄມ້ ແຂວງສະຫວັນນະເຂດ, (ໂທ : 041-252497)